**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 78 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 30/12/22

# ມະຕິ

## ກອງປະຊຸມສະພາແຫ່ງຊາດ
## ວ່າດ້ວຍ ການຮັບຮອງເອົາບົດລາຍງານ ຂອງສານປະຊາຊົນສູງສຸດ
## ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງວຽກງານ ປະຈຳປີ 2023

- ອີງຕາມ ລັດຖະທຳມະນູນ ສະບັບປີ 2015 ມາດຕາ 53;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ສະບັບປີ 2020 ມາດຕາ 59;
- ອີງຕາມ ບົດລາຍງານ ຂອງ ສານປະຊາຊົນສູງສຸດ ສະບັບເລກທີ 1114/ສປສສ, ລົງວັນທີ 23 ທັນວາ 2022.

ຜ່ານການພິຈາລະນາ ຢ່າງເລິກເຊິ່ງ ຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ຕໍ່ ບົດລາຍງານ ຂອງ ສານປະຊາຊົນສູງສຸດ ໃນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃນວາລະກອງປະຊຸມ ຄັ້ງວັນທີ 26-27 ທັນວາ 2022.

## ກອງປະຊຸມ ຕົກລົງ:

**ມາດຕາ 1** ຮັບຮອງເອົາບົດລາຍງານ ຂອງສານປະຊາຊົນສູງສຸດ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2022

ກອງປະຊຸມສະແດງຄວາມຊົມເຊີຍ ສານປະຊາຊົນສູງສຸດ ທີ່ໄດ້ສູ້ຊົນຜ່ານຜ່າອຸປະສັກຕ່າງໆ, ຕັ້ງໜ້າຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍດ້ວຍຄວາມຮັບຜິດຊອບສູງ ເຮັດໃຫ້ແຜນວຽກຈຸດສຸມ ປະຈຳປີ 2022 ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີຜົນສຳເລັດ ແລະ ມີການຫັນປ່ຽນດີຂຶ້ນ ເປັນຕົ້ນ ໄດ້ປັບປຸງຄຸນນະພາບໃນການດຳເນີນຄະດີຂອງສານຂັ້ນຕົ້ນ ເຮັດໃຫ້ອັດຕາສ່ວນການຂໍອຸທອນຫຼຸດລົງ; ໄດ້ສຸມໃສ່ສຶກສາອົບຮົມການເມືອງແນວຄິດ, ຍົກລະດັບຄວາມຮູ້ ຄວາມສາມາດທາງດ້ານທິດສະດີການເມືອງ ແລະ ວິຊາສະເພາະ; ປັບປຸງ ແລະ ຍົກສູງຈັນຍາບັນ, ຈັນຍາທຳ ຂອງຜູ້ພິພາກສາ, ຈ່າສານ ແລະ ພະນັກງານ-ລັດຖະກອນ ຂອງສານປະຊາຊົນ ຢ່າງເປັນລະບົບ; ໄດ້ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງ ແລະ ບັນຈຸ, ສັບຊ້ອນ, ເລື່ອນຊັ້ນ, ເລື່ອນຂັ້ນ ໃຫ້ພະນັກງານສານສຳເລັດໂດຍພື້ນຖານ; ໄດ້ເອົາໃຈໃສ່ປັບປຸງແບບແຜນ, ກົນໄກການດຳເນີນຄະດີຂອງສານ ໃຫ້ມີຄວາມໄລ່ລຽງກ່ວາເກົ່າ, ຕິດພັນກັບການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໂດຍໄດ້ແຕ່ງຕັ້ງຜູ້ພິພາກສາຮັບຜິດຊອບສະເພາະ ເພື່ອຮັບປະກັນການພິຈາລະນາຕັດສິນ, ພິພາກສາຄະດີຢາເສບຕິດ ຖືກຕ້ອງຕາມກົດໝາຍ ແລະ ເຫດການຕົວຈິງ, ເຂັ້ມງວດ ແລະ ວ່ອງໄວຕາມກຳນົດເວລາທີ່ກົດໝາຍໄດ້ກຳນົດໄວ້.

ຄຽງຄູ່ກັບນັ້ນ, ກອງປະຊຸມເຫັນວ່າ ຍັງມີຂໍ້ຄົງຄ້າງຈຳນວນໜຶ່ງ ທີ່ສານປະຊາຊົນສູງສຸດ ຈະຕ້ອງສືບຕໍ່ສູ້ຊົນປັບປຸງແກ້ໄຂ ເຊັ່ນ: ການພິຈາລະນາແກ້ໄຂຄະດີທີ່ເຂົ້າມາຫາສານ ຈຳນວນໜຶ່ງ ຍັງຊັກຊ້າ, ບໍ່ຖືກຕ້ອງຕາມກຳນົດເວລາທີ່ກົດໝາຍກຳນົດໄວ້; ການເກັບກຳຂໍ້ມູນບໍ່ທັນຄົບຖ້ວນ ແລະ ພາວະວິໄສ, ການຊັ່ງຊາ, ຕີລາຄາ, ວິເຄາະ, ວິໄຈຂໍ້ມູນຫຼັກຖານ ຈຳນວນໜຶ່ງ ບໍ່ຖືກຕ້ອງຕາມຄວາມເປັນຈິງ; ການກຳນົດເຫດການປະເດັນຂໍ້ຂັດແຍ່ງ ຍັງຄຸມເຄືອ ພາໃຫ້ການດຳເນີນຄະດີ ບໍ່ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ; ການຮຽກເອົາບຸກຄົນທີສາມ ແລະ ຜູ້ກ່ຽວຂ້ອງກັບຄະດີ ເຂົ້າຮ່ວມໃນການດຳເນີນຄະດີ ແລະ ການເປີດການໂຕ້ຖຽງໃນທີ່ປະຊຸມສານ ຍັງເຮັດໄດ້ໜ້ອຍ; ການຂຽນຄຳຕັດສິນ, ຄຳພິພາກສາຄະດີບາງເລື່ອງ ຍັງບໍ່ທັນຕອບຖືກປະເດັນຂໍ້ຂັດແຍ່ງ ຊຶ່ງເປັນສາຍເຫດໃຫ້ຄູ່ຄວາມມີການຂໍອຸທອນ, ຂໍລົບລ້າງຄະດີ ແລະ ການແກ້ໄຂຄະດີຈຳນວນໜຶ່ງ ຍັງຫຼິ້ນໄປຫຼິ້ນມາຫຼາຍຄັ້ງ, ການແກ້ໄຂຄະດີຂອງສານປະຊາຊົນ ໃນປີ 2022 ປະຕິບັດໄດ້ພຽງແຕ່ 66,18% ບໍ່ບັນລຸຕາມຄາດໝາຍທີ່ກຳນົດໄວ້ໃນມະຕິກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ແມ່ນ 85%; ຄະນະສານ ຂອງສານປະຊາຊົນສູງສຸດ ຈຳນວນໜຶ່ງ ຍັງບໍ່ທັນໄດ້ຮັບການຍົກສູງຄຸນນະພາບ ໃນການຕິດຕາມກວດກາການພິຈາລະນາຄະດີ ຂອງສານປະຊາຊົນທ້ອງຖິ່ນ ໃຫ້ເປັນປົກກະຕິ ແລະ ຕໍ່ເນື່ອງເທົ່າທີ່ຄວນ ເຮັດໃຫ້ການຄົ້ນຄວ້າຄະດີ ຂອງພະນັກງານສານຈຳນວນໜຶ່ງ ຍັງບໍ່ທັນໜັກແໜ້ນ, ເລິກເຊິ່ງ ຫຼືມີພຶດຕິກຳລະເມີດກົດໝາຍ; ການປະເມີນຜູ້ພິພາກສາ ດີ-ເກັ່ງ ຍັງບໍ່ທັນບັນລຸຕາມແຜນການທີ່ວາງໄວ້; ການສ້າງ, ປັບປຸງກົດໝາຍຍັງຊັກຊ້າ, ການຜັນຂະຫຍາຍກົດໝາຍເປັນນິຕິກຳໃຕ້ກົດໝາຍ ຍັງເຮັດໄດ້ໜ້ອຍ.

**ມາດຕາ 2 ຮັບຮອງເອົາ ທິດທາງວຽກງານ ປະຈຳປີ 2023 ຂອງ ສານປະຊາຊົນສູງສຸດ**

ກອງປະຊຸມເຫັນດີຮັບຮອງເອົາ 6 ຄາດໝາຍສູ້ຊົນ ແລະ 10 ວຽກງານຈຸດສຸມແຕ່ລະດ້ານ ຕາມບົດລາຍງານ ຂອງສານປະຊາຊົນສູງສຸດ ແລະ ສະເໜີໃຫ້ເອົາໃຈໃສ່ບາງວຽກງານ ດັ່ງນີ້:

1. ສຸມໃສ່ປັບປຸງ ແລະ ຍົກສູງຄຸນນະພາບໃນການດຳເນີນຄະດີຂອງສານ ຂັ້ນຕົ້ນ ແລະ ຂັ້ນອຸທອນ ໃຫ້ຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ຫຼັກຖານຕົວຈິງ; ເພີ່ມທະວີການໂຕ້ແຍ່ງຫຼັກຖານຂອງໂຈດ, ຈຳເລີຍ, ບຸກຄົນທີສາມຕໍ່ເຫດການ, ຂໍ້ສະເໜີ ຫຼື ຂໍ້ມູນຫຼັກຖານໃນຄະດີ ໃຫ້ຄົບຖ້ວນ ແລະ ສິ້ນສຸດການໂຕ້ແຍ່ງຕາມກົດໝາຍ, ຮັບປະກັນໃຫ້ໂຈດ, ຈຳເລີຍ, ທະນາຍຄວາມ ຫຼື ບຸກຄົນທີສາມເຂົ້າຮ່ວມໂຕ້ຖຽງຢູ່ທີ່ປະຊຸມສານທຸກຄະດີ ແລະ ຖືເອົາຜົນການໂຕ້ແຍ່ງ, ໂຕ້ຖຽງເປັນບ່ອນອີງໃນການຕັດສິນ, ພິພາກສາ ໃຫ້ລະອຽດ, ຈະແຈ້ງ ແລະ ຖືກຕ້ອງ; ການຂຽນຄຳຕັດສິນ, ຄຳພິພາກສາຄະດີຂອງສານ ໃຫ້ຖືກຕ້ອງຕາມຫຼັກຖານ, ເຫດການຕົວຈິງຂອງຄະດີ ແລະ ກົດໝາຍ;
2. ເພີ່ມທະວີການປະຕິບັດສິດ ແລະ ໜ້າທີ່ ຂອງສານປະຊາຊົນສູງສຸດ ໃນການພິພາກສາຄະດີ ເປັນຂັ້ນລົບລ້າງ ທາງດ້ານກົດໝາຍ ໃຫ້ເຂັ້ມງວດ, ຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ພ້ອມທັງເອົາໃຈໃສ່ປະຕິບັດສິດ ໃນການແນະນຳ ແລະ ກວດກາຄວາມຖືກຕ້ອງ ແລະ ຄວາມເປັນເອກະພາບທາງດ້ານກົດໝາຍໃນການດຳເນີນຄະດີ ຂອງສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ;
3. ເອົາໃຈໃສ່ຄົ້ນຄວ້າ ພິຈາລະນາແກ້ໄຂຄະດີທີ່ເຂົ້າມາສານ ຂັ້ນຕົ້ນ ໃຫ້ບັນລຸ 85% ຂຶ້ນໄປ, ອັດຕາການຂໍອຸທອນບໍ່ໃຫ້ເກີນ 15%, ຄູ່ຄວາມເຫັນດີຕາມຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ກວມເປີເຊັນສູງຂຶ້ນກວ່າປີຜ່ານມາ;
4. ເອົາໃຈໃສ່ເປັນພິເສດ ໃນການບຳລຸງສ້າງຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະ ພະນັກງານ-ລັດຖະກອນຂອງສານ ທາງດ້ານການເມືອງແນວຄິດ ຄຽງຄູ່ກັບການຍົກລະດັບຄວາມຮູ້ ຄວາມສາມາດ ແລະ ຄວາມຊຳນານງານ ເພື່ອເຮັດຫຼ້ອນໜ້າທີ່ວຽກງານຢ່າງມີປະສິດທິພາບ ພ້ອມທັງ ມີຈັນຍາບັນ, ຈັນຍາທຳ,

ຄຸນສົມບັດສິນທຳປະຕິວັດ ຢ່າງໜັກແໜ້ນ; ການຄັດເລືອກ ແລະ ສອບເສັງເອົາຜູ້ພິພາກສາ ຕ້ອງຮັບປະກັນໃຫ້ໄດ້ຜູ້ທີ່ມີມາດຕະຖານ, ເງື່ອນໄຂຢ່າງຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ປະເມີນການປະຕິບັດໜ້າທີ່ຂອງຜູ້ພິພາກສາ ໃຫ້ມີຄຸນນະພາບ ແລະ ຄັດເລືອກໃຫ້ໄດ້ຜູ້ພິພາກສາ ທີ່ດີ-ເກັ່ງ ກວມ 60% ຂອງຈຳນວນຜູ້ພິພາກສາ ທີ່ໄດ້ຮັບການປະເມີນ;

5. ສືບຕໍ່ຈັດຕັ້ງການປະເມີນການປະຕິບັດກົດໝາຍວ່າດ້ວຍ ສານປະຊາຊົນ ແລະ ກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ໃຫ້ຮັບປະກັນທາງດ້ານຄຸນນະພາບ, ຊອກໃຫ້ເຫັນດ້ານດີ, ດ້ານຂໍ້ຄົງຄ້າງ, ບັນຫາທີ່ບໍ່ສາມາດປະຕິບັດໄດ້ ຫຼືມີການລະເມີດກົດໝາຍ, ບັນຫາຊ່ອງຫວ່າງຂອງກົດໝາຍ, ບັນຫາທີ່ເຫັນວ່າມີຄວາມຈຳເປັນຕ້ອງໄດ້ຜັນຂະຫຍາຍ ເປັນນິຕິກຳໃຕ້ກົດໝາຍ ເພື່ອເປັນບ່ອນອີງ ໃນການກຳນົດວິທີການ, ມາດຕະການ ເພື່ອປັບປຸງ, ແກ້ໄຂ ໃຫ້ສາມາດລາຍງານຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX.

**ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດ ຂອງສານປະຊາຊົນສູງສຸດ**

ກອງປະຊຸມເຫັນດີຮັບຮອງເອົາ 7 ມາດຕະການ ໃນການຈັດຕັ້ງປະຕິບັດທິດທາງແຜນການ ແລະ ວຽກຈຸດສຸມ 2023 ທີ່ສານປະຊາຊົນສູງສຸດ ໄດ້ກຳນົດໃນບົດລາຍງານ ແລະ ສະເໜີບາງມາດຕະການເພີ່ມເຕີມ ດັ່ງນີ້:

1. ເພີ່ມທະວີຄວາມຮັບຜິດຊອບການເມືອງ ຂອງຄະນະນຳສານປະຊາຊົນສູງສຸດ ໃນການນຳພາ-ຊີ້ນຳຈັດຕັ້ງຜັນຂະຫຍາຍ ມະຕິ ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ເປັນແຜນງານ, ໂຄງການ ແລະ ວຽກງານຈຸດສຸມທີ່ແທດເໝາະກັບໜ້າທີ່ການເມືອງ ຂອງສານປະຊາຊົນ; ນຳພາ-ຊີ້ນຳ ການຈັດຕັ້ງປະຕິບັດທິດທາງວຽກງານ ປີ 2023 ໃຫ້ເກີດເປັນຮູບປະທຳເປັນຈິງ ແລະ ທັງຈັດຕັ້ງເຜີຍແຜ່ເຊື່ອມຊຶມ ວຽກງານດັ່ງກ່າວ ໃຫ້ຜູ້ພິພາກສາ ແລະ ພະນັກງານຂອງສານປະຊາຊົນ ຢ່າງທົ່ວເຖິງ, ເລິກເຊິ່ງ ເພື່ອເຮັດໃຫ້ບັນດາຄາດໝາຍສູ້ຊົນ ໃນປີ 2023 ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງມີຜົນສຳເລັດ ຕາມແຜນການທີ່ກຳນົດໄວ້;

2. ເພີ່ມທະວີຄວາມຮັບຜິດຊອບການເມືອງ ຂອງຄະນະນຳສານປະຊາຊົນ ແຕ່ລະຂັ້ນ ໃນການນຳພາ-ຊີ້ນຳວຽກງານດ້ານການເມືອງ-ແນວຄິດ, ຈັນຍາບັນ, ຈັນຍາທຳ ໃຫ້ແກ່ຜູ້ພິພາກສາ ແລະ ພະນັກງານຂອງສານປະຊາຊົນແຕ່ລະຂັ້ນ ຕິດພັນກັບການບຳລຸງ, ຍົກລະດັບທາງດ້ານວິຊາສະເພາະ, ຄວາມຮູ້ຄວາມສາມາດ, ທັກສະ, ພິບໄຫວ ໃນການຄົ້ນຄວ້າຄະດີ ກໍຄື ຄວາມເປັນແບບຢ່າງໃນການເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ; ເອົາໃຈໃສ່ຕິດຕາມກວດກາ ການປະຕິບັດໜ້າທີ່ຂອງຜູ້ພິພາກສາ ແລະ ຕີລາຄາປະເມີນຜົນຜູ້ພິພາກສາ ຊອກໃຫ້ໄດ້ຜູ້ທີ່ດີ-ເກັ່ງ ມີຜົນງານ ແລະ ເປັນແບບຢ່າງນຳໜ້າ ເພື່ອຍ້ອງຍໍສົ່ງເສີມ ແລະ ສ້າງເປັນພະນັກງານສືບທອດ ພ້ອມທັງມີມາດຕະການຕໍ່ຜູ້ພິພາກສາ ທີ່ມີເຈດຕະນາລະເມີດກົດໝາຍ ຢ່າງເຂັ້ມງວດ ແລະ ເດັດຂາດ;

3. ເພີ່ມທະວີ ການຕິດຕາມກວດກາ ການດຳເນີນຄະດີຢູ່ສານຂັ້ນຕົ້ນ ແລະ ຂັ້ນອຸທອນ ຢ່າງເປັນປົກກະຕິ, ຕໍ່ເນື່ອງ ເພື່ອເຮັດໃຫ້ການດຳເນີນຄະດີ ມີຄວາມຖືກຕ້ອງຕາມກົດໝາຍ ແລະ ເຫດການຕົວຈິງແຕ່ຫົວທີ ເພື່ອຫຼຸດຜ່ອນການຂໍອຸທອນ, ຂໍລົບລ້າງ ຫຼືຂໍຮື້ຟື້ນຄະດີຂອງຄູ່ຄວາມ, ຈຳກັດ ແລະ ສະກັດກັ້ນທັດສະນະ

ຫຼືແນວຄິດເອື່ອຍອີງໃສ່ສານຂັ້ນເທິງ; ເອົາໃຈໃສ່ກວດກາທາງດ້ານວິຊາສະເພາະ ຂອງຄະນະສານ ຂັ້ນລຸ່ມໃຫ້ເປັນປົກກະຕິ;

4. ເອົາໃຈໃສ່ປະຕິບັດແຜນການ ສ້າງ, ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ຈຳເປັນ ໃນການຈັດຕັ້ງປະຕິບັດວຽກງານຂອງຕົນ ເປັນຕົ້ນ: ໃຫ້ຄົ້ນຄວ້າເພີ່ມສິດ, ອຳນາດໃຫ້ສານທ້ອງຖິ່ນ ເພື່ອຂະຫຍາຍຂອບເຂດການພິຈາລະນາຄະດີຂອງສານປະຊາຊົນເຂດ ແລະ ການຕັດສິນຄະດີ ໂດຍຜູ້ພິພາກສາຜູ້ດຽວ ແນໃສ່ຫຼຸດຜ່ອນການອັ່ງອໍຄະດີ ຢູ່ສານປະຊາຊົນຂັ້ນແຂວງ;

5. ເພີ່ມທະວີການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ໃນການດຳເນີນຄະດີຕາມຂະບວນຍຸຕິທຳ ຮັບປະກັນໃຫ້ການດຳເນີນຄະດີຂອງສານໃນແຕ່ລະຂັ້ນ ມີຄວາມຖືກຕ້ອງ, ຮອບດ້ານ, ຄົບຖ້ວນ, ພາວະວິໄສ ແລະ ຍຸຕິທຳ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ສານປະຊາຊົນສູງສຸດ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ກຳມາທິການແຜນການ, ການເງິນ ແລະ ການກວດສອບ ຮ່ວມກັບກຳມາທິການຍຸຕິທຳ ສົມທົບກັບ ລັດຖະບານ ຊີ້ນຳ ກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ພິຈາລະນາເພີ່ມງົບປະມານ ແລະ ສະໜອງພາຫະນະ, ອຸປະກອນ ແລະ ພື້ນຖານໂຄງລ່າງ ທີ່ຈຳເປັນໃຫ້ແກ່ສານປະຊາຊົນ ເພື່ອສາມາດຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ ຕາມກົດໝາຍ ໃຫ້ສຳເລັດຕາມແຜນການທີ່ວາງໄວ້.
3. ມອບໃຫ້ ຄະນະປະຈຳສະພາແຫ່ງຊາດ ຊີ້ນຳ ບັນດາກຳມາທິການຂອງສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຕິດຕາມ, ຊຸກຍູ້ ແລະ ອຳນວຍຄວາມສະດວກ ໃນການຕິດຕາມກວດກາການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ, ກຳມາທິການຍຸຕິທຳ ຕ້ອງເສີມຂະຫຍາຍບົດບາດ ເປັນໃຈກາງປະສານງານ ແລະ ເປັນເຈົ້າການ ໃນການຕິດຕາມ, ຊຸກຍູ້ ແລະ ກວດກາຕາມປະເມີນຜົນການຈັດຕັ້ງປະຕິບັດມະຕິສະບັບນີ້ ແລະ ລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດ ເພື່ອຊາບ ແລະ ຊີ້ນຳ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ